ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ**

ເລກທີ 1026 /ສຄອຊ.

ນະຄອນຫລວງວຽງຈັນ, 22 SEP 2021

**ຮຽນ**: ທ່ານ ອາດສະພັງທອງ ສີພັນດອນ, ເຈົ້າຄອງນະຄອນຫຼວງວຽງຈັນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ !

**ເລື່ອງ**: ສະເໜີການແກ້ໄຂອັນຮີບດ່ວນຕໍ່ຜົນກະທົບຂອງຂອງມາດຕະການສະກັດກັ້ນ, ປ້ອງກັນ ແລະ ຄວບຄຸມ ພະຍາດ COVID-19.

- ອີງຕາມ ດຳລັດ237/ນຍ, ລົງວັນທີ 18/05/2020 ວ່າດວ້ຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ສະພາການຄ້າ ແລະ ອຸດສະຫາກຳ ແຫ່ງຊາດລາວ.
- ອີງຕາມ ຄຳສັ່ງສະບັບເລກທີ 016/ຈນວ,ລົງວັນທີ 19 ກັນຍາ 2021 ວ່າດ້ວຍມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ການລະບາດ ຂອງພະຍາດໂຄວິດ 19 ຢູ່ນະຄອນຫຼວງວຽງຈັນ ແຕວັນທີ 19 – 30 ກັນຍາ 2021.

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ) ຂໍຖືເປັນກຽດລາຍງານ ກ່ຽວກັບ ການຈັດຕັ້ງປະຕິບັດຕາມຄຳສັ່ງເລກທີ 016/ຈນວ,ລົງວັນທີ 19 ກັນຍາ 2021 ວ່າດວ້ຍມາດຕະການປອ້ງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດ ຂອງພະຍາດໂຄວິດ 19 ຢູນະຄອນຫຼວງວຽງຈັນ ແຕວັນທີ 19-30 ກັນຍາ 2021 ຂອງພາກທຸລະກິດ. ເຊິ່ງໂດຍພື້ນຖານແລ້ວ ສຄອຊ ເຫັນດີ ຕໍ່ຄຳສັ່ງດັ່ງກ່າວເພື່ອຫຼຸດຜົນກະທົບຕໍ່ຊີວິດ, ຊັບສິນ ແລະ ການເປັນຢູ່ຂອງປະຊາຊົນ. ແຕ່ເຖິງຢ່າງໃດກໍ່ຕາມ ເນື່ອງຈາກວ່າ ນະຄອນຫຼວງວຽງຈັນ ເປັນເຂດເສດຖະກິດທີ່ໃຫ່ຍ ແລະມີອົງປະກອບອັນສະລັບຊັບຊ້ອນ ຈຶ່ງເຮັດໃຫ້ ຍັງມີສະພາບຄວາມຫຍຸ້ງຍາກໃນການດຳເນີນທຸລະກິດ, ການຂົນສົ່ງ ແລະ ການ ໄປ - ມາ ຕ່າງໆ. ຕໍ່ກັບບັນຫາດັ່ງກ່າວນີ້ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ໃນນາມຕາງໜ້າໃຫ້ພາກທຸລະກິດ ຈຶ່ງຂໍຖືເປັນກຽດ ຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາແກ້ໄຂ ບາງຂໍ້ສະເໜີ ເຊິ່ງມີລາຍລະອຽດດັ່ງນີ້ :

1. **ອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງສິນຄ້າພາຍໃນນະຄອນຫຼວງວຽງຈັນ.**ປັດຈຸບັນບາງດ່ານກວດກາ ຂອງເຈົ້າໜ້າທີ່ ຢູ່ບັນດາເມືອງ ຂອງ ນະຄອນຫຼວງວຽງຈັນ ບໍ່ອະນຸຍາດໃຫ້ລົດຂົນສົ່ງສິນຄ້າ ໄປສົ່ງສິນຄ້າຕາມຮ້ານຊຸບເປີມາເກັດ, ຮ້ານສະດວກຊື້, ຮ້ານຄ້າ ແລະ ອື່ນໆ ໄດ້, ເຖິງແມ່ນວ່າຈະມີເອກະສານຈາກຄະນະສະເພາະກິດ ຫຼື ເຈົ້າໜ້າທີ່ທີ່ກ່ຽວຂ້ອງຢັ້ງຢືນໃຫ້ແລ້ວກໍ່ຕາມ. ບັນຫາດັ່ງກ່າວນີ້ເຮັດໃຫ້ຜູ້ປະກອບການຂົນສົ່ງມີຄວາມຫຍຸ້ງຍາກ, ບໍ່ສາມາດເຂົ້າໄປສົ່ງສິນຄ້າໃນຮ້ານຄ້າຕ່າງໆໄດ້ ເຊິ່ງອາດຈະກໍ່ໃຫ້ເກີດການຂາດແຄນສິນຄ້າໃນຮ້ານຄ້າຕ່າງໆໄດ້ຈຶ່ງຂໍສະເໜີທ່ານ ພິຈາລະນາຍົກຍ້າຍ ການປິດເສັ້ນທາງ ລະຫວ່າງ 4 ຕົວເມືອງພາຍໃນ(ຈັນທະບູລີ, ສີໂຄດຕະບອງ, ໄຊເສດຖາ ແລະ ສີສັດຕະນາກ)ໄປຕັ້ງຢູ່ທາງອອກໄປຫາ 5 ເມືອງນອກ ເພື່ອອຳນວຍໃຫ້ການສັນຈອນ

ຂອງເຈົ້າໜ້າທີ່ພະນັກງານທີ່ມີຄວາມຈຳເປັນໃນການສືບຕໍ່ຈັດຕັ້ງປະຕິບັດວຽກງານ ແລະ ເຮັດໃຫ້ການຂົນສົ່ງແຈກຢາຍສິນຄ້າ ເຄື່ອງອຸປະໂພກ - ບໍລິໂພກ ມີຄວາມສະດວກ ໂດຍອາດປັບປຸງການຕັ້ງດ່ານໃນ4ຕົວເມືອງໃນ ມາເປັນການຈັດຕັ້ງໜ່ວຍກວດກາລາດຕາເວນແທນ.

2. **ບັນຫາຂົນສົ່ງສິນຄ້າໄປຍັງແຂວງຕ່າງໆ.** ປັດຈຸບັນການຂົນສົ່ງສິນຄ້າຈາກ ນະຄອນຫຼວງວຽງຈັນ ໄປຍັງ ບັນດາແຂວງຕ່າງໆ ຜູ້ຂົນສົ່ງຕ້ອງໄດ້ຂໍໃບອະນຸຍາດຈາກຄະນະສະເພາະກິດ ນະຄອນຫຼວງວຽງຈັນ ຊຶ່ງຖືເປັນໃບເບີກທາງ, ແຕ່ໃນການຈັດຕັ້ງປະຕິບັດຕົວຈິງ ຍັງມີຫລາຍແຂວງ ບໍ່ເຫັນຄວາມສຳຄັນຕໍ່ໃບອະນຸຍາດດັ່ງກ່າວ, ຜູ້ຂົນສົ່ງຈຳເປັນຕ້ອງໄດ້ຂໍໃບອະນຸຍາດຈາກຄະນະສະເພາະກິດທ້ອງຖິ່ນເພີ່ມຕື່ມຈຶ່ງເຂົ້າໄປໃນແຂວງໄດ້ ຫລືບໍ່ກໍ່ຖືກປະຕິເສດ. ດັ່ງນັ້ນ, ຈຶ່ງສະເໜີຄະນະສະເພາະກິດ ນະຄອນຫຼວງວຽງຈັນ ພິຈາລະນາ ຊ່ວຍປະສານສົມທົບກັບ ທ້ອງຖິ່ນເພື່ອຄວາມເປັນເອກະພາບການຈັດຕັ້ງປະຕິບັດແຈ້ງການຕ່າງໆຂອງ ສນຍ ເພື່ອອຳນວຍຄວາມສະດວກໃນການເຄື່ອນຍ້າຍສິນຄ້າພາຍໃນປະເທດ ຫລື ພິຈາລະນາລົບລ້າງການອອກໃບອະນຸຍາດຈາກຄະນະສະເພາະກິດ ນະຄອນຫຼວງວຽງຈັນ.

3. **ອຳນວຍຄວາມສະດວກແກ່ບັນດາພະນັກງານ, ວິຊາການຂອງບັນດາວິສະຫະກິດ ທີ່ມີຄວາມຈຳເປັນ ໄປປະຕິບັດໜ້າທີໄດ້.** ການກວດກາຂອງເຈົ້າໜ້າທີ່ບາງດ່ານບໍ່ອະນຸຍາດໃຫ້ ພະນັກງານຂອງວິສາຫະກິດ ທີ່ມີຄວາມຈຳເປັນ ໄປປະຕິບັດໜ້າທີໄດ້ ເຖິງແມ່ນວ່າຈະມີເອກະສານຢັ້ງຢືນກ່ຽວກັບຄວາມຈຳເປັນດັ່ງກ່າວກໍ່ຕາມ. ຕໍ່ບັນຫາດັ່ງກ່າວນີ້ອາດຈະສ້າງຄວາມເສຍຫາຍໃຫ້ກັບຊຸ້ນສົນວິສາຫະກິດ ແລະ ຜູ້ບໍລິໂພກໄດ້ ແລະ ສົ່ງຜົນກະທົບທີ່ບໍ່ດີ ແລະບໍ່ຈຳເປັນຕໍ່ເສດຖະກິດ ແລະ ສັງຄົມ. ດັ່ງນັ້ນເພື່ອໃຫ້ພະນັກງານທີ່ມີພາລະກິດທີ່ຈຳເປັນສາມາດໄປປະຕິບັດໜ້າທີ່ ແລະ ເປີດໂຮງຈັກໂຮງງານໄດ້ ຈຶ່ງຮຽນສະເໜີຄະນະສະເພາະກິດ ລົງຕິດຕາມກວດກາການປະຕິບັດມາດຕະການປ້ອງກັນແຜ່ລະບາດພະຍາດໂຄວິດ 19 ຕາມພື້ນຖານການຜະລິດເພື່ອປະເມີນຄວາມສ່ຽງ, ບັນດາໂຮງງານຜະລິດຂະໜາດໃຫຍ່ເຊັ່ນ: ໂຮງງານເບຍ, ໂຮງງານໂຄກ, ຢາສູບ, ເຂດເສດຖະກິດພິເສດ, ຕັດຫຍິບ, ສາງ ແລະ ອື່ນໆ ທີ່ແມ່ນໂຮງຈັກໂຮງງານທີ່ມີມາດຕະການແລະລະບົບປ້ອງກັນທີ່ແໜ້ນໜາ, ພະນັກງານສ່ວນໃຫຍ່ໄດ້ຮັບວັກຊີນສອງເຂັມ, ເພື່ອເປັນຂໍ້ມູນໃນການອະນຸຍາດ ແລະ ການອຳນວຍຄວາມສະດວກການດຳເນີນທຸລະກິດ ລວມທັງລະບົບການສົ່ງອອກ-ນຳເຂົ້າສິນຄ້າຢູ່ດ່ານພາສີ ແລະ ອື່ນໆ

4. **ການປະເມີນຜົນກະທົບຈາກການອອກຄຳສັ່ງປິດເມືອງ.** ເພື່ອເປັນການຮັບຮູ້ເຖິງຜົນກະທົບຂອງການປິດເມືອງແຕ່ລະຄັ້ງໄດ້ສົ່ງຜົນກະທົບຕໍ່ເສດຖະກິດແນວໃດ, ສຄອຊ ຂໍສະເໜີໃຫ້ ພິຈາລະນາປະເມີນຜົນກະທົບຕໍ່ເສດຖະກິດຈາກການລັອກດາວຄັ້ງຜ່ານໆມາແລະໃນຄັ້ງນີ້ຮຸນແຮງຊ່ຳໃດ?, ການປິ່ນປົວຜູ້ທີ່ໄດ້ຮັບວັກຊີນຄົບສອງເຂັມມີອາການຮຸນແຮງຊ່ຳໃດ? ຫາຍດີແລ້ວທໍ່ໃດ? ເພື່ອເປັນຂໍ້ມູນໃນການເລັ່ງສັກວັກຊີນໃຫ້ກຸ່ມເປົ້າໝາຍ ແລະ ໂຄສະນາໃຫ້ສັງຄົມໄດ້ຮັບຮູ້ ມີສະຕິໃນການປ້ອງກັນ.

5. **ເພື່ອບໍ່ໃຫ້ມີຜົນກະທົບຕໍ່ ເສດຖະກິດ ແລະ ສັງຄົມ ແຜ່ລາມໃນວົງກວ້າງຂໍໃຫ້ພິຈາລະນາສືບຕໍ່ປິດການເຂົ້າ-ອອກ ເຂດແດງສະເພາະເຂດທີ່ມີການຕິດເຊື້ອ ເພື່ອບໍ່ໃຫ້ສົ່ງຜົນກະທົບທີ່ບໍ່ຈຳເປັນກັບການສັນຈອນແລະຂົງເຂດອື່ນໆ.**

6. ສຄອຊ ຂໍສະແດງຄວາມຊົມເຊີຍ ມາຍັງ ພະແນກອຸດສາຫະກໍາ ແລະ ການຄ້າ ນະຄອນຫຼວງວຽງຈັນ, ກໍ່ຄືການນໍາ ນະຄອນຫຼວງວຽງຈັນ ທີ່ເຫັນໄດ້ຄວາມສໍາຄັນ ຂອງການດໍາລົງຊີວິດຂອງປະຊາຊົນພາຍໃນນະຄອນຫຼວງວຽງຈັນ ແລະ ໄດ້ພິຈາລະນາອອກແຈ້ງການເພີ່ມເຕີມ ສະບັບເລກທີ 1345/ອຄ.ນວ.ຄພນ ລົງວັນທີ 21 ກັນຍາ 2021, ໃນ ການອະນຸຍາດໃຫ້ເປີດຮ້ານສະດວກຊື້ມິນິມາເກັດ, ຊຸບເປີ້ມາເກັດ ແລະຮ້ານຂາຍເຄື່ອງແຫ້ງຕ່າງໆ ແຕ່ຕ້ອງປະຕິບັດ ມາດຕະການປ້ອງການໂຄວິດ-19 ຢ່າງເຂັ້ມງວດ, ແລະ ຂໍສະເໜີຊ່ວຍພິຈາລະນາອໍານວຍຄວາມສະດວກໃຫ້ແກ່ ກິດຈະກໍາອື່ນໆທີ່ມີຄວາມຈໍາເປັນທີ່ສາມາດປະຕິບັດມາດຕະການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ 19ໄດ້ ຢ່າງເຂັ້ມງວດ.

ດັ່ງນັ້ນ, ສຄອຊ ຈຶ່ງຮຽນສະເໜີມາຍັງທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ເພື່ອຄົ້ນຄ້ວາພິຈາລະນາ ແລະໃຫ້ທິດ ຊີ້ນໍາຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ສະພາການຄ້າແລະ ອຸດສະຫາກໍາ ແຫ່ງຊາດລາວ

ປະທານ

ອຸເດດ ສຸວັນນະວົງ